# ບັນດາຜູ້ນຳ GMS ພົບປະນັກທຸລະກິດ-ຊາວໜຸ່ມ ແລະ ເອດີບີ



ກ່ອນການດຳເນີນກອງປະຊຸມສຸດຍອດອະນຸພາກພື້ນແມ່ນ້ຳຂອງ (GMS) ຄັ້ງທີ 3, ບັນດາຜູ້ນຳ GMS ຊຶ່ງປະກອບດ້ວຍພະນະທ່ານນາຍົກລັດຖະມົນຕີຈາກ 6 ປະເທດຄື: ສປປ ລາວ, ສ.ສ ຫວຽດນາມ, ສ.ປ ຈີນ, ຣາຊະອານາຈັກກຳປູເຈຍ, ສະຫະພາບມຽນມາ ແລະ ຣາຊະອານາຈັກໄທ ໄດ້ຮ່ວມເວທີພົບປະກັບນັກທຸລະກິດ, ຊາວໜຸ່ມ ແລະ ທະນາຄານອາຊີ ADB ຢູ່ທີ່ໂຮງແຮມດອນຈັນພາເລດ ນະຄອນຫລວງວຽງຈັນ ໃນວັນທີ 30 ມີນາ 2008 ນີ້.

ໃນພິທີ, ບັນດາທ່ານນາຍົກລັດຖະມົນຕີປະເທດ GMS ຕ່າງກໍໄດ້ຜັດປ່ຽນກັນມີຄຳເຫັນ. ໂດຍພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນຖານະເປັນປະທານ ກໍໄດ້ກ່າວສະແດງ ຄວາມປິຕິຍິນດີຕໍ່ງານພົບປະເປັນຄັ້ງທຳອິດ ຊຶ່ງມີຄວາມໝາຍສຳຄັນ ຕໍ່ການຍົກສູງບົດບາດຂອງຊາວໜຸ່ມ ແລະ ການເສີມຂະຫຍາຍມິດຕະພາບ ແລະ ການຮ່ວມມືຂອງບັນດາປະເທດ GMS. ໃນກອງປະຊຸມສຸດຍອດ GMS ຄັ້ງນີ້, ບັນດາຜູ້ນຳທັງ 6 ປະເທດ ໄດ້ປຶກສາຫາລື ແລະ ຕົກລົງກ່ຽວກັບການໃຫ້ສາມຊີ ( 3 C ) ຄື: ການເພີ່ມທະວີການເຊື່ອມຕໍ່, ການເພີ່ມທະວີຄວາມສາມາດແຂ່ງຂັນ ແລະ ການເພີ່ມທະວີຈິດສຳນຶກແຫ່ງການເປັນປະຊາຄົມໜຶ່ງດຽວຂອງ GMS ໄດ້ດຳເນີນໃນທຸກຮູບແບບ ຊຶ່ງຈະຊ່ວຍໃຫ້ພວກເຮົາບັນລຸວິໄສທັດແຫ່ງການເປັນພາກພື້ນໜຶ່ງດຽວ; ມີຄວາມສາມັກຄີກົມກຽວ ແລະ ມີຄວາມຈະເລີນວັດທະນາ. ສະນັ້ນຊາວໜຸ່ມຊຶ່ງເປັນອະນາຄົດຂອງປະເທດຊາດ ແລະ ເປັນກຳລັງແຮງຂອງການປະຕິບັດແຜນງານ GMS ຄວນຈະຕ້ອງຮັບຮູ້ຢ່າງເລິກເຊິ່ງ ແລະ ຫາລືກັນຢ່າງລະອຽດ ກ່ຽວກັບຍຸດທະສາດດັ່ງກ່າວ. ຜູ້ນຳ GMS ເຊື່ອໝັ້ນວ່າ: ບັນດາຕົວແທນຊາວໜຸ່ມ ຫລາຍຮ້ອຍລ້ານຄົນ ຈະໃຊ້ໂອກາດອັນມີຄ່ານີ້ ເພື່ອທຳຄວາມຮູ້ຈັກກັນ, ພ້ອມກັນສຸມສະຕິປັນຍາໃສ່ແລກປ່ຽນຄຳຄິດຄຳເຫັນ ບົນໄມຕີຈິດມິດຕະພາບຂອງຊາດ GMS ເພື່ອບັນລຸຄວາມເຂົ້າໃຈ ແລະ ເປັນໜຶ່ງດຽວ ໃນການສືບຕໍ່ຈັດຕັ້ງປະຕິບັດໂຄງການຕ່າງໆ ທັງໄລຍະກາງ ແລະ ໄລຍະຍາວ ຂອງ GMS.

ໃນຕອນເຊົ້າວັນດຽວກັນ, ບັນດາຕົວແທນນັກທຸລະກິດທັງ 6 ປະເທດ 80 ກວ່າ ຄົນ ໄດ້ຮ່ວມກັນເຈລະຈາກ່ຽວກັບການຄ້າ ແລະ ການລົງທຶນ ໃນອະນຸພາກພື້ນແມ່ນນ້ຳຂອງ GMS, ໂດຍການເປັນປະທານຂອງທ່ານ ດຣ. ນາມ

ວິຍະເກດ, ລັດຖະມົນຕີວ່າການກະຊວງອຸດສາຫະກຳ-ການຄ້າ ແລະ ທ່ານ ສຸລິວົງ ດາລາວົງ, ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ.

ກອງປະຊຸມຄັ້ງນີ້ ໄດ້ເນັ້ນການປຶກສາຫາລື ກ່ຽວກັບບັນຫາທີ່ເປັນສິ່ງທ້າທາຍ ໃນການສົ່ງເສີມການຄ້າ ແລະ ການຕົກລົງໃນ GMS ໂດຍສະເພາະບັນຫາທິດທາງ ແລະ ຄວາມເປັນໄປໄດ້ໃນຕໍ່ໜ້າ; ການຊອກຊ່ອງທາງອັນຮີບດ່ວນເພື່ອຈັດຕັ້ງປະຕິບັດສັນຍາວ່າດ້ວຍການຂົນສົ່ງຂ້າມຊາຍແດນ ແລະ ບົດບາດເງື່ອນໄຂໃນການສົ່ງເສີມ ໃຫ້ມີສ່ວນຮ່ວມຂອງພາກເອກກະຊົນ; ນອກນັ້ນ ຍັງໄດ້ມີການຫາລືກ່ຽວກັບການສົ່ງເສີມໃຫ້ມີການເຂົ້າຮ່ວມຂອງພາກສ່ວນບໍລິສັດຂະໜາດນ້ອຍ ແລະ ຂະໜາດກາງ ໃນການສົ່ງອອກສິນຄ້າດ້ວຍທາງກົງ ຫລື ຜ່ານຕົວແທນຈຳໜ່າຍທີ່ເປັນເງື່ອນໄຂໜຶ່ງສຳລັບການສ້າງລາຍຮັບໃຫ້ແກ່ບໍລິສັດສົ່ງອອກຂະໜາດນ້ອຍ. ສຳລັບຕອນແລງຂອງວັນດຽວກັນ, ບັນດາລັດຖະມົນຕີ GMS ກໍໄດ້ຮ່ວມລົງນາມ ໃນບົດບັນທຶກຄວາມເຂົ້າໃຈລ່ວງໜ້າ ສອງສະບັບ ກ່ຽວກັບວາລະ ແລະ ຄາດໝາຍການຈັດຕັ້ງປະຕິບັດ ການຄ້າພະລັງງານຂ້າມຊາຍແດນໃນ GMS ແລະ ການພັດທະນາແລວເສດຖະກິດ GMS ເໜືອ-ໃຕ້ ແລະ ການເພີ່ມທະວີຄວາມມີປະສິດທິຜົນ ດ້ານການຈັດຕັ້ງ ສຳລັບການພັດທະນາແລວເສດຖະກິດ.